ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ ເລກທີ 5065---/ສສກ

ນະຄອນຫຼວງວຽງຈັນ, ວັນທີ 10 ສິງຫາ 2026

## ຄຳແນະນຳ

## ການໃຫ້ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 681/ລບ ລົງວັນທີ 24 ທັນວາ 2021;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍນັກຄົ້ນຄວ້າວິທະຍາສາດ ສະບັບເລກທີ 262/ລບ ລົງວັນທີ 09 ພຶດສະພາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການສະພາວິທະຍາສາດ ແຫ່ງຊາດ ສະບັບເລກທີ 145/ຫສວຊ, ລົງວັນທີ 29 ກໍລະກົດ 2026.

### ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຄຳແນະນຳ:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ມີຈຸດປະສົງເພື່ອ:

1. ຜັນຂະຫຍາຍເນື້ອໃນ ດຳລັດວ່າດ້ວຍນັກຄົ້ນຄວ້າວິທະຍາສາດ ສະບັບເລກທີ 262/ລບ ລົງວັນທີ 09 ພຶດສະພາ 2025;
2. ແນະນຳກ່ຽວກັບການກຳນົດຫຼັກການ, ເງື່ອນໄຂ, ມາດຕະຖານ, ຂັ້ນຕອນ ແລະ ວິທີການ ໃນການຄັດເລືອກນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ ໃຫ້ມີເນື້ອໃນລະອຽດ, ຈະແຈ້ງ ແລະ ສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
3. ເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງວຽກງານວິທະຍາສາດ, ເຕັກໂນໂລຊີ ແລະ ຄະນະກຳມະການ ແຕ່ລະຂັ້ນໃນການຄົ້ນຄວ້າ ແລະ ຄັດເລືອກ ນັກຄົ້ນຄວ້າວິທະຍາສາດ, ນັກປະດິດຄິດແຕ່ງ ແລະ ນັກສ້າງນະວັດຕະກຳ ທີ່ມີເງື່ອນໄຂໄດ້ຮັບນາມມະຍົດນັກຄົ້ນຄວ້າ ແລະ ລາງວັນວິທະຍາສາດ ຢ່າງມີຄວາມຖືກ ຕ້ອງ, ສອດຄ່ອງກັບມາດຕະຖານ ແລະ ເງື່ອນໄຂ ທີ່ກຳນົດ;
4. ກຳນົດນະໂຍບາຍ ແລະ ສັນລະເສີນຄຸນງາມຄວາມດີ, ການອຸທິດເຫື່ອແຮງ ແລະ ສະຕິປັນຍາ ຂອງນັກຄົ້ນຄວ້າວິທະຍາສາດ, ນັກປະດິດຄິດແຕ່ງ ແລະ ນັກສ້າງນະວັດຕະກຳ ເປັນທີ່ຍອມຮັບຂອງສັງຄົມ ແລະ ສ້າງປະໂຫຍດໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**II. ຫຼັກການ.**

ການໃຫ້ນາມມະຍົດ ນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນ ວິທະຍາສາດ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ;
2. ຮັບປະກັນໃນການຄັດເລືອກໃຫ້ໄປຕາມຫຼັກການ, ເງື່ອນໄຂ, ມາດຕະຖານ, ຂັ້ນຕອນ ແລະ ວິທີການ ທີ່ກຳນົດໄວ້;
3. ຮັບປະກັນ ໃນການພົວພັນປະສານງານ ບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການ ຈັດຕັ້ງປະຕິບັດ ໃນແຕ່ລະໄລຍະ;
4. ຮັບປະກັນຄວາມສະເໝີພາບ, ເອກະພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ, ມີຫຼັກຖານຢັ້ງຢືນ ແລະ ສາມາດກວດສອບໄດ້.

**III. ເງື່ອນໄຂ ແລະ ມາດຕະຖານ ຜູ້ທີ່ຈະໄດ້ຮັບນາມມະຍົດນັກຄົ້ນຄວ້າວິທະຍາສາດ**

ຜູ້ທີ່ຈະໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ມີເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

**1. ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ**

**1.1 ເງື່ອນໄຂຜູ້ທີ່ຈະໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ**

1) ມີຜົນງານດີເດັ່ນເປັນພິເສດ, ອຸທິດສະຕິປັນຍາ ແລະ ເຫື່ອແຮງ ໃຫ້ແກ່ການຄົ້ນຄວ້າ ວິທະຍາສາດ ຢ່າງໜ້ອຍ ສິບຫ້າ ປີ;
2) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕຳແໜ່ງລະດັບຊຳນານງານ ແລະ ລະດັບຊ່ຽວຊານ;
3) ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມວາລະສານພາຍໃນ ທີ່ໄດ້ລະຫັດມາດຕະຖານສາກົນປະຈຳສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດີຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ທີ່ນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຢ່າງກວ້າງຂວາງ;
4) ໄດ້ຮັບນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ.

**1.2 ມາດຕະຖານ ຜູ້ທີ່ຈະໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ**

1) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕຳແໜ່ງລະດັບຊຳນານງານ ແລະ ລະດັບຊ່ຽວຊານ;
2) ມີຜົນງານຂອງການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ໃນການສ້າງແນວຄວາມຄິດ, ຄວາມຮູ້, ວິທີການໃໝ່, ມີທັດສະນະ ແລະ ມີຂະບວນການວິວັດທີ່ກ້າວໜ້າ ໃນລະດັບຊາດ ແລະ ສາກົນ;
3) ເປັນຜູ້ນຳໃນການຄົ້ນຄວ້າວິທະຍາສາດ ດ້ານນະວັດຕະກຳ ແລະ ມີຜົນງານການຄົ້ນຄວ້າວິທະຍາສາດ ຈຳນວນ ຫ້າບົດ ທີ່ໄດ້ຮັບການຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ແລະ ມີໃບຢັ້ງຢືນຜົນງານການຄົ້ນຄວ້າ ທີ່ໄດ້ຈົດທະບຽນຊັບສິນທາງປັນຍາ ຢ່າງໜ້ອຍ ສອງໃບ ພາຍໃນ ສິບປີ ແລະ ຂຽນປຶ້ມຕຳລາ ເປັນຂອງຕົນເອງ ຈຳນວນ ສາມເຫຼັ້ມ ຂຶ້ນໄປ;
4) ມີສ່ວນຮ່ວມໃນການຄົ້ນຄວ້າສ້າງ ແລະ ປັບປຸງ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນຍຸດທະສາດ, ວິໄສທັດ, ກຳນົດຈຸດສຸມ ໃນການພັດທະນາວຽກງານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ແຫ່ງຊາດ ແລະ ກຳນົດແຜນການພັດທະນາການຄົ້ນຄວ້າວິທະຍາສາດ ໃນແຕ່ລະໄລຍະ;

5) ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ດີເດັ່ນ ໃນສາຂາວິຊາສະເພາະ ທີ່ຕົນຊໍານານງານ, ເປັນທີ່ຍອມຮັບ ແລະ ມີຊື່ສຽງ ສາມາດປະກອບສ່ວນ ເຂົ້າໃນການພັດທະນາວິຊາການ ການບໍລິຫານຄຸ້ມຄອງໃນອົງກອນຂອງຕົນ ແລະ ພັດທະນາຊຸມຊົນ;

6) ສ້າງເຄືອຂ່າຍຮ່ວມມື ການຄົ້ນຄວ້າວິທະຍາສາດ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ພາຍໃນ ແລະ ສາກົນ;

7) ນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດ ເຂົ້າໃນແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ພ້ອມທັງມີການເຜີຍແຜ່ ແລະ ຕີພິມໃນວາລະສານພາຍໃນ ທີ່ໄດ້ລະຫັດມາດຕະຖານສາກົນປະຈໍາສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index.

**2. ນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ**

2.1 ເງື່ອນໄຂ ຜູ້ທີ່ຈະໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ

1) ມີຜົນງານດີເດັ່ນເປັນພິເສດ, ອຸທິດສະຕິປັນຍາ ແລະ ເຫື່ອແຮງ ໃຫ້ແກ່ການຄົ້ນຄວ້າວິທະຍາສາດ ຢ່າງໜ້ອຍ ສິບປີ;

2) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕໍາແໜ່ງລະດັບພື້ນຖານ ແລະ ປະສົບການ;

3) ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານພາຍໃນ ທີ່ໄດ້ລະຫັດມາດຕະຖານສາກົນປະຈໍາສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ທີ່ນໍາໃຊ້ເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຢ່າງກວ້າງຂວາງ;

4) ໄດ້ຮັບລາງວັນວິທະຍາສາດໃດໜຶ່ງມາກ່ອນ.

2.2 ມາດຕະຖານ ຜູ້ທີ່ຈະໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ

1) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕໍາແໜ່ງລະດັບພື້ນຖານ ແລະ ປະສົບການ;

2) ມີຜົນງານຂອງການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ ໃນການສ້າງແນວຄວາມຄິດ, ຄວາມຮູ້, ວິທີການໃໝ່, ມີທັດສະນະ ແລະ ມີຂະບວນການວິວັດທີ່ກ້າວໜ້າ ໃນລະດັບຊາດ ແລະ ສາກົນ;

3) ມີຜົນງານໃນການຄົ້ນຄວ້າວິທະຍາສາດ ຈໍານວນ ຫ້າບົດ ທີ່ໄດ້ຮັບການຕີພິມລົງວາລະສານພາຍໃນ ຈໍານວນ ສາມບົດ ແລະ ສາກົນ ຈໍານວນ ສອງບົດ ໃນໄລຍະ ສິບປີ ແລະ ຂຽນປຶ້ມຕໍາລາ ເປັນຂອງຕົນເອງ ຈໍານວນ ໜຶ່ງເຫຼັ້ມ ຂຶ້ນໄປ;

4) ມີສ່ວນຮ່ວມໃນການຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກໍາ ແລະ ແຜນພັດທະນາການຄົ້ນຄວ້າວິທະຍາສາດ ຂອງຂະແໜງການ ໃນແຕ່ລະໄລຍະ;

5) ມີຜົນງານການຄົ້ນຄວ້າວິທະຍາສາດທີ່ຕົນເປັນຫຼັກ ແລະ ຄົ້ນຄວ້າຮ່ວມທີ່ຖືກນໍາໃຊ້ໄປອ້າງອີງໃນລະດັບປະເທດ, ພາກພື້ນ, ສາກົນ ຢ່າງໜ້ອຍ ໜຶ່ງຮ້ອຍຄັ້ງ ແລະ ເຜີຍແຜ່ໃນກອງປະຊຸມວິທະຍາສາດ ພາຍໃນ ແລະ ສາກົນ ຈໍານວນ ສາມຄັ້ງ ຂຶ້ນໄປ;

6) ເປັນຄະນະກໍາມະການ ແລະ ທີ່ປຶກສາໂຄງການຄົ້ນຄວ້າວິທະຍາສາດໃດໜຶ່ງ ຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງໜ້ອຍ ຫ້າ ໂຄງການ;

7) ພົວພັນ ແລະ ຮ່ວມມື ການຄົ້ນຄວ້າວິທະຍາສາດ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ພາຍໃນ ແລະ ສາກົນ;

8) ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ ເຂົ້າໃນແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ພ້ອມທັງມີການເຜີຍແຜ່, ຕີພິມໃນວາລະສານພາຍໃນທີ່ໄດ້ລະຫັດມາດຕະຖານສາກົນປະຈຳສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index.

## IV. ເງື່ອນໄຂ ແລະ ມາດຕະຖານ ຜູ້ທີ່ຈະໄດ້ຮັບລາງວັນວິທະຍາສາດ

ຜູ້ທີ່ຈະໄດ້ຮັບລາງວັນວິທະຍາສາດ ມີເງື່ອນໄຂ ແລະ ມາດຕະຖານ ມີດັ່ງນີ້:

### 1. ລາງວັນວິທະຍາສາດ ລະດັບຊາດ

1) ມີຜົນງານດີເດັ່ນ, ອຸທິດສະຕິປັນຍາ ແລະ ເຫື່ອແຮງໃຫ້ແກ່ການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ;
2) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕຳແໜ່ງລະດັບຊຳນານງານ ແລະ ຊ່ຽວຊານ;
3) ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານພາຍໃນທີ່ໄດ້ລະຫັດມາດຕະຖານສາກົນປະຈຳສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ຊຶ່ງສາມາດນຳໃຊ້ເຂົ້າ ໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
4) ໄດ້ຮັບລາງວັນວິທະຍາສາດ ລະດັບກະຊວງ, ອົງການ ມາກ່ອນ.

### 2. ລາງວັນວິທະຍາສາດ ລະດັບກະຊວງ ແລະ ອົງການທຽບເທົ່າ

1) ມີຜົນງານດີເດັ່ນ, ອຸທິດສະຕິປັນຍາ ແລະ ເຫື່ອແຮງໃຫ້ແກ່ການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ;
2) ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີຕຳແໜ່ງລະດັບ ພື້ນຖານ ແລະ ປະສົບການ;
3) ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານພາຍໃນທີ່ໄດ້ລະຫັດມາດຕະຖານສາກົນປະຈຳສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ຊຶ່ງສາມາດນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
4) ໄດ້ຮັບລາງວັນວິທະຍາສາດ ໃດໜຶ່ງມາກ່ອນ.

### 3. ລາງວັນວິທະຍາສາດ ລະດັບທ້ອງຖິ່ນ (ນະຄອນຫຼວງ, ແຂວງ)

1) ມີຜົນງານດີເດັ່ນ, ອຸທິດສະຕິປັນຍາ ແລະ ເຫື່ອແຮງໃຫ້ແກ່ການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ;
2) ມີຜົນງານຄົ້ນຄວ້າວິທະຍາສາດ, ພັດທະນານະວັດຕະກຳ ທີ່ມີລັກສະນະກ້າວໜ້າ ພ້ອມທັງເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານພາຍໃນ ທີ່ໄດ້ລະຫັດມາດຕະຖານສາກົນປະຈຳສິ່ງພິມຕໍ່ເນື່ອງ (ISSN) ທີ່ໄດ້ລະຫັດລະບຸຕົວຕົນດິຈິຕອນ (DOI) ແລະ ຕີພິມໃນວາລະສານສາກົນ Wed of Science ຫຼື SCOPUS Index ຊຶ່ງສາມາດນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ.

## V. ການປະກອບເອກະສານ.

ການປະກອບເອກະສານ ເພື່ອສະເໜີຂໍນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ ປະກອບມີ ດັ່ງນີ້:

1. ໜັງສືສະເໜີ;
2. ຊີວະປະຫວັດຫຍໍ້ຂອງຜູ້ສະເໜີ;
3. ຜົນງານການຄົ້ນຄວ້າວິທະຍາສາດ, ຜົນງານການປະດິດແຕ່ງ ແລະ ຜົນງານສ້າງນະວັດຕະກຳ;
4. ບົດລາຍງານການຈັດຕັ້ງປະຕິບັດການຄົ້ນຄວ້າວິທະຍາສາດ ແລະ ການສ້າງນະວັດຕະກຳ;
5. ລັດຖະດຳລັດ ຫຼື ດຳລັດ ຫຼື ຂໍ້ຕົກລົງ ຮັບຮອງຕຳແໜ່ງ (ຍົກເວັ້ນລາງວັນວິທະຍາສາດລະດັບທ້ອງຖິ່ນ);

6. ໃບຢັ້ງຢືນການເຜີຍແຜ່ຜົນງານ ຂອງຜູ້ສະເໜີໃນວາລະສານ ແລະ ກອງປະຊຸມວິຊາການ ພາຍໃນ-ຕ່າງປະເທດ;
7. ໃບຢັ້ງຢືນຮັບຮອງ ການປະເມີນຜົນງານຄົ້ນຄວ້າວິທະຍາສາດ, ຜົນງານປະດິດຄິດແຕ່ງ ແລະ ຜົນງານສ້າງນະວັດຕະກໍາ ຈາກສະພາວິທະຍາສາດຂອງຂະແໜງການ ແລະ ສະພາວິທະຍາສາດແຫ່ງຊາດ ພາຍໃນ ສາມປີ ຫຼື ຫ້າປີ ຂອງແຕ່ລະໄລຍະ ເປີດບັ້ນແຂ່ງຂັນ;
8. ເອກະສານອື່ນ ທີ່ກ່ຽວຂ້ອງ.

## VI. ຂັ້ນຕອນ, ວິທີການຄັດເລືອກ ແລະ ການຮັບຮອງ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ

ຂັ້ນຕອນ, ວິທີການຄັດເລືອກ ແລະ ການຮັບຮອງ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ ມີດັ່ງນີ້:

### 1. ຂັ້ນຕອນ ແລະ ວິທີການຄັດເລືອກ

1) ນັກຄົ້ນຄວ້າວິທະຍາສາດ ສະເໜີຜົນງານ ໄປຫາ ສະພາວິທະຍາສາດຂອງຂະແໜງການ;
2) ຫ້ອງການສະພາວິທະຍາສາດແຫ່ງຊາດ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ສັງລວມ ແລະ ລາຍງານການສະເໜີ ຂອງສະພາວິທະຍາສາດຂອງຂະແໜງການ ເພື່ອລາຍງານຫາສະພາວິທະຍາາດແຫ່ງຊາດ;
3) ສະພາວິທະຍາສາດແຫ່ງຊາດ ແລະ ສະພາວິທະຍາສາດຂອງຂະແໜງການ ແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນງານການຄົ້ນຄວ້າ, ຜົນງານປະດິດຄິດແຕ່ງ ແລະ ຜົນງານສ້າງນະວັດຕະກໍາ ປະເມີນທຸກ ສາມ ປີ ແລະ ຫ້າ ປີ ຕາມການສະເໜີຂອງຂະແໜງການ;
4) ຄະນະຮັບຜິດຊອບປະເມີນຜົນງານ ລາຍງານຜົນການປະເມີນ ພ້ອມທັງຂໍອະນຸມັດໃຫ້ນາມ ມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ການໃຫ້ລາງວັນວິທະຍາສາດ ຕາມລະບຽບການ.

### 2. ການຮັບຮອງນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ການມອບລາງວັນວິທະຍາສາດ

1) ປະທານປະເທດ ແຫ່ງ ສປປ ລາວ ເປັນຜູ້ຮັບຮອງ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ປະດັບຫຼຽນນາມມະຍົດວິທະຍາສາດແຫ່ງຊາດ;
2) ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເປັນຜູ້ຮັບຮອງ ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ປະດັບຫຼຽນນາມມະຍົດວິທະຍາສາດ ດີເດັ່ນ;
3) ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເປັນຜູ້ມອບລາງວັນວິທະຍາສາດ ລະດັບຊາດ;
4) ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ມອບລາງວັນວິທະຍາສາດ ລະດັບກະຊວງ ແລະ ອົງການ;
5) ປະທານຄະນະກໍາມະການປົກຄອງນະຄອນຫຼວງ, ແຂວງ ເປັນຜູ້ມອບລາງວັນວິທະຍາສາດ ລະດັບທ້ອງຖິ່ນ.

## VII. ການປະຕິບັດນະໂຍບາຍ

ຜູ້ທີ່ໄດ້ຮັບ ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ ແລະ ນັກຄົ້ນຄວ້າວິທະຍາສາດ ດີເດັ່ນ ໄດ້ຮັບນະໂຍບາຍ ດັ່ງນີ້:

### 1. ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ

1) ຮັບຫຼຽນນາມມະຍົດນັກຄົ້ນຄວ້າວິທະຍາສາດ ແຫ່ງຊາດ;
2) ຮັບໂລ້ລາງວັນ;
3) ໄດ້ຮັບເງິນນະໂຍບາຍ ຈໍານວນ 100,000,000 ກີບ ຕໍ່ຄົນຕໍ່ຄັ້ງ.

2. **ນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ**
   1) ຮັບຫຼຽນນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ;
   2) ຮັບໂລ້ລາງວັນ;
   3) ໄດ້ຮັບເງິນນະໂຍບາຍ ຈຳນວນ 80,000,000 ກີບ ຕໍ່ຄົນຕໍ່ຄັ້ງ.
3. **ລາງວັນວິທະຍາສາດ**
   1) ລະດັບຊາດ ໄດ້ຮັບໃບຍ້ອງຍໍ ແລະ ເງິນນະໂຍບາຍ ຈຳນວນ 70,000,000 ກີບຕໍ່ຄົນຕໍ່ຄັ້ງ.
   2) ລະດັບກະຊວງ ແລະ ອົງການ ໄດ້ຮັບໃບຍ້ອງຍໍ ແລະ ເງິນນະໂຍບາຍ ຈຳນວນ 60,000,000 ກີບຕໍ່ຄົນຕໍ່ຄັ້ງ.
   3) ລະດັບທ້ອງຖິ່ນ ໄດ້ຮັບໃບຍ້ອງຍໍ ແລະ ເງິນນະໂຍບາຍ ຈຳນວນ 50,000,000 ກີບຕໍ່ຄົນຕໍ່ຄັ້ງ.
4. **ການລຶບລ້າງນາມມະຍົດນັກຄົ້ນຄວ້າວິທະຍາສາດ.**

   ຜູ້ທີ່ໄດ້ຮັບນາມມະຍົດນັກຄົ້ນຄວ້າວິທະຍາສາດ ຫາກມີການກະທຳທີ່ເຊື່ອມເສຍກຽດສັກສີ ມີການປະພຶດທີ່ຜິດຕໍ່ກົດໝາຍ ແລະ ລະບຽບການ ມອບໃຫ້ການຈັດຕັ້ງ ແລະ ອົງການຄຸ້ມຄອງ ເປັນຜູ້ດຳເນີນຕາມກົດໝາຍ ແລະ ລະບຽບການ.
5. **ງົບປະມານ**

   ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄົ້ນຄວ້າຂຶ້ນແຜນງົບປະມານ ເພື່ອປະຕິບັດນະໂຍບາຍຕໍ່ນັກຄົ້ນຄວ້າວິທະຍາສາດ, ນັກປະດິດຄິດແຕ່ງ ແລະ ນັກສ້າງນະວັດຕະກຳ ຜູ້ທີ່ໄດ້ຮັບນາມມະຍົດການຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ ໂດຍນຳໃຊ້ງົບປະມານຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ແຫຼ່ງທຶນອື່ນ ຕາມລະບຽບການ.

**VIII. ຄະນະກຳມະການຄຸ້ມຄອງການໃຫ້ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ**

1. ຄະນະກຳມະການຄຸ້ມຄອງການໃຫ້ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະ ຍາສາດ ປະກອບມີ: ສະພາວິທະຍາສາດແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ແລະ ສະພາວິທະຍາສາດຂອງຂະແໜງການ;
2. ຄະນະກຳມະການຄຸ້ມຄອງການໃຫ້ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

   2.1 ສະພາວິທະຍາສາດແຫ່ງຊາດ

   ສະພາວິທະຍາສາດ ແຫ່ງຊາດ ພິຈາລະນາຢັ້ງຢືນຜົນງານຄົ້ນຄວ້າ, ປະດິດຄິດແຕ່ງ, ສ້າງນະວັດຕະກຳ ເພື່ອນຳສະເໜີຕໍ່ລັດຖະບານຮັບຮອງ ການຈັດປະເພດຜົນງານ ເພື່ອໃຫ້ນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ, ນາມມະຍົດນັກຄວ້າວິທະຍາສາດ ດີເດັ່ນ, ຫຼຽນການາມມະຍົດ, ມອບໂລ້ລາງວັນ, ໃບຍ້ອງຍໍ ແລະ ເງິນລາງວັນວິທະຍາສາດ ລະດັບຊາດ ບົນພື້ນຖານການປະເມີນຜົນງານ ຈາກສະພາວິທະຍາສາດແຫ່ງຊາດ ແລະ ສະພາວິທະຍາສາດຂອງຂະແໜງ ການ ຫ້າປີ ຕໍ່ຄັ້ງ;

   2.2 ກະຊວງສຶກສາທິການ ແລະ ກິລາ

   ສະພາວິທະຍາສາດຂອງຂະແໜງການ (ຂັ້ນສູນກາງ) ພິຈາລະນາຢັ້ງຢືນຜົນງານຄົ້ນຄວ້າ ປະດິດຄິດແຕ່ງ, ສ້າງນະວັດຕະກຳ ເພື່ອສະເໜີຕໍ່ ກະຊວງສຶກສາທິການ ແລະ ກິລາ ຮັບຮອງການຈັດປະເພດຜົນງານ ເພື່ອມອບໃບກຽດຕິຄຸນ, ໂລ້ລາງວັນ, ໃບຍ້ອງຍໍ ແລະ ເງິນລາງວັນວິທະຍາສາດ ລະດັບກະຊວງ ແລະ ອົງການທຽບເທົ່າ ບົນພື້ນຖານການປະເມີນຜົນງານຈາກສະພາວິທະຍາສາດຂອງຂະແໜງການ (ຂັ້ນສູນກາງ) ສາມປີຕໍ່ຄັ້ງ;

2.3 ສະພາວິທະຍາສາດຂອງຂະແໜງການຂັ້ນທ້ອງຖິ່ນ

ສະພາວິທະຍາສາດຂອງຂະແໜງການ (ຂັ້ນສູນກາງ) ພິຈາລະນາຢັ້ງຢືນຜົນງານຄົ້ນຄວ້າ ປະດິດຄິດແຕ່ງ, ສ້າງນະວັດຕະກໍາ ເພື່ອສະເໜີຕໍ່ ອົງການປົກຄອງນະຄອນຫຼວງ, ແຂວງຮັບຮອງການຈັດປະເພດຜົນງານ ເພື່ອມອບໃບກຽດຕິຄຸນ, ໂລ້ລາງວັນ, ໃບຍ້ອງຍໍ ແລະ ເງິນລາງວັນວິທະຍາສາດ ລະດັບທ້ອງຖິ່ນ (ອົງການປົກຄອງນະຄອນຫຼວງ, ແຂວງ) ບົນພື້ນຖານການປະເມີນຜົນງານ ຈາກສະພາວິທະຍາສາດຂອງຂະແໜງການ (ຂັ້ນທ້ອງຖິ່ນ) ສາມປີ ຕໍ່ຄັ້ງ.

## IX. ການຈັດຕັ້ງປະຕິບັດ

1. ໃຫ້ຫ້ອງການສະພາວິທະຍາສາດ ແຫ່ງຊາດ, ກົມຄຸ້ມຄອງວິທະຍາສາດ, ສະພາວິທະຍາສາດຂອງຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ເຜີຍແຜ່ ແນະນໍາການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ທົ່ວເຖິງ ແລະ ໄດ້ຮັບຜົນສໍາເລັດ;
2. ໃຫ້ແຕ່ລະພາກສ່ວນຄົ້ນຄວ້າຄັດເລືອກ ນັກຄົ້ນຄວ້າວິທະຍາສາດ ທີ່ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ສະເໜີຂໍນາມມະຍົດ ນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນ ວິທະຍາສາດໃນແຕ່ລະໄລຍະ;
3. ຄະນະກໍາມະການແຕ່ລະຂັ້ນຄົ້ນຄວ້າພິຈາລະນາຕາມການສະເໜີຂອງພາກສ່ວນຕ່າງໆ ທີ່ຂຶ້ນກັບຕົນຜູ້ທີ່ຖືກຮັບຮອງ ເພື່ອນໍາສະເໜີນາມມະຍົດນັກຄົ້ນຄວ້າວິທະຍາສາດ ແລະ ລາງວັນວິທະຍາສາດ;
4. ຄໍາແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ທອງສະລິດ ມັງໜໍ່ເມກ